ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# BCEL OneHeart ມອບເງິນທີ່ລະດົມໄດ້ຈາກສັງຄົມ ຊ່ວຍເຫຼືອຜູ້ປະສົບໄພພິບັດນໍ້າຖ້ວມທີ່ ແຂວງ ອັດຕະປື ມູນຄ່າທັງໝົດ 4 ຕື້ກວ່າກີບ

ໃນວັນທີ 20 ທັນວາ 2019, ທຄຕລ ຕາງໜ້າຜູ້ຮ່ວມບໍລິຈາກຜ່ານ BCEL OneHeart ໄດ້ມອບເງິນທີ່ລະດົມໄດ້ຈາກສັງຄົມ ຜ່ານ BCEL OneHeart ໃຫ້ແກ່ຜູ້ຖືກຜົນກະທົບຈາກໄພພິບັດນໍ້າຖ້ວມທີ່ ເມືອງ ສະໜາມໄຊ ແຂວງ ອັດຕະປື ເນື່ອງຈາກຄູກັ້ນນໍ້າເຂື່ອນເຊປຽນ-ເຊນໍ້ານ້ອຍແຕກ ໃນຄັ້ງວັນທີ 23 ກໍລະກົດ 2018 ທີ່ຜ່ານມານີ້. ຈາກເຫດການໄພພິບັດນໍ້າຖ້ວມທີ່ເກີດຂຶ້ນໃນຄັ້ງນັ້ນ ໄດ້ສ້າງຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນທີ່ດໍາລົງຊີວິດໃນຂົງເຂດດັ່ງກ່າວຢ່າງມະຫາສານ. ດ້ວຍເຫດນັ້ນ, ທຄຕລ ຈຶ່ງໄດ້ເຂົ້າໄປມີສ່ວນຮ່ວມໃນການລະດົມທຶນຊ່ວຍເຫຼືອຜູ້ປະສົບໄພພິພັດນໍ້າຖ້ວມຜ່ານຊ່ອງທາງ BCEL OneHeart ເຊິ່ງສາມາດລະດົມໄດ້ທັງໝົດຈໍານວນ 4.055.322.843,91 ກີບ (ສີ່ຕື້ຫ້າສິບຫ້າລ້ານສາມແສນຊາວສອງພັນແປດຮ້ອຍສີ່ສິບສາມຈຸດເກົ້າສິບເອັດກີບ) ມີຜູ້ຮ່ວມບໍລິຈາກທັງໝົດ 26.991 ຄັ້ງ. ໃນນີ້ຈໍານວນເງິນທີ່ສາມາດລະດົມໄດ້ຈາກຊ່ອງທາງ BCEL One, Onepay, i-Bank, Counter ມີ 26.694 ຄັ້ງ, ຈໍານວນເງິນ 3.932.557.722,06 ກີບ ແລະ ຈໍານວນເງິນທີ່ສາມາດລະດົມໄດ້ຜ່ານບັດ (Visa, Mastercard JCB ແລະ Unionpay) ຈາກຕ່າງປະເທດມີ 297 ຄັ້ງ, ຈໍານວນເງິນ 122.765.121,85 ກີບ.

ພິທີມອບ-ຮັບເງິນຊ່ວຍເຫຼືອດັ່ງກ່າວ ແມ່ນໄດ້ຈັດຂຶ້ນຢູ່ທີ່ສູນພັກຊົ່ວຄາວ ຂອງຜູ້ປະສົບໄພນໍ້າຖ້ວມຈຸດບ້ານດົ່ງບາກ ເມືອງສະໜາມໄຊ ແຂວງ ອັດຕະປື ຕາງໜ້າໃຫ້ແກ່ຜູ້ບໍລິຈາກທັງໝົດມອບເງິນ ຊ່ວຍເຫຼືອໃນຄັ້ງນີ້ໂດຍ ທ່ານ ບົວວັນ ສີມະລີວົງ ຮອງຜູ້ອໍານວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ຕາງໜ້າຮັບໂດຍ ນາຍບ້ານຈາກ 9 ບ້ານທີ່ໄດ້ຮັບຜົນກະທົບຈາກໄພພິບັດນໍ້າຖ້ວມ ປະກອບມີ: **ນາຍບ້ານບ້ານແທຄຸ້ມໂຄກກ່ອງ, ນາຍບ້ານບ້ານແທຄຸ້ມທ່າອວນ, ນາຍບ້ານບ້ານສະໜອງໃຕ້, ນາຍບ້ານບ້ານທ່າແສງຈັນ, ນາຍບ້ານບ້ານທ່າຫີນ, ນາຍບ້ານບ້ານຫີນລາດ, ນາຍບ້ານບ້ານໃໝ່, ນາຍບ້ານບ້ານໄຊດອນໂຂງ ແລະ ນາຍບ້ານບ້ານຕະມີ່ຢອດ.** ພາຍໃຕ້ການເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ອຸ່ນຫຼ້າ ໄຊຍະສິດ ຮອງເຈົ້າແຂວງໆອັດຕະປື ພ້ອມດ້ວຍ ທ່ານ ບຸນໂຮມ ພົມມະສານ ເຈົ້າເມືອງໆສະໜາມໄຊ ແລະ ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງອັດຕະປື, ຫົວໜ້າ ທຄຕລ ສາຂາອັດຕະປື ແລະ ຕາງໜ້າຄະນະຮັບຜິດຊອບໂຄງການ OneHeart ພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນກໍ່ໃຫ້ກຽດເຂົ້າຮ່ວມຢ່າງພ້ອມພຽງ.



ສາເຫດທີ່ເຮັດໃຫ້ມີການຊັກຊ້າໃນການມອບເງິນຊ່ວຍເຫຼືອໃນຄັ້ງນີ້ແມ່ນເນື່ອງມາຈາກ ພາກສ່ວນກ່ຽວຂ້ອງໄດ້ໃຊ້ເວລາຫຼາຍພໍສົມຄວນໃນການເກັບກຳຂໍ້ມູນຜູ້ໄດ້ຮັບຜົນກະທົບຢ່າງລະອຽດ, ມາຮອດປະຈຸບັນນີ້ ຈຶ່ງຮູ້ຂໍ້ມູນລະອຽດຂອງຜູ້ປະສົບໄພພິບັດທັງໝົດ ຈຶ່ງສາມາດເປີດບັນຊີໃຫ້ຜູ້ທີ່ໄດ້ຮັບຜົນກະທົບແລ້ວຈຳນວນທັງໝົດ 1.174 ບັນຊີ (ບັນຊີ/ຄອບຄົວ) ໂດຍມີຜູ້ປະສົບໄພພິບັດນໍ້າຖ້ວມທັງໝົດ 4.663 ຄົນ ຈຳນວນເງິນສະເລ່ຍແມ່ນ 869.681 ກີບ/ຄົນ ເຊິ່ງໄດ້ຄິດໄລ່ຕາມຈຳນວນສະມາຊິກໃນຄອບຄົວຕົວຈິງ. ເງິນຊ່ວຍເຫຼືອທັງໝົດແມ່ນໄດ້ຖືກໂອນເຂົ້າບັນຊີຂອງຜູ້ປະສົບໄພຮຽບຮ້ອຍແລ້ວ ເພື່ອໃຫ້ເຂົາເຈົ້ານຳໄປຟື້ນຟູຊີວິດການເປັນຢູ່ໃຫ້ດີຂຶ້ນກວ່າເກົ່າ.

ໂອກາດນີ້ຕາງໜ້າຜູ້ປະສົບໄພຂໍສະແດງຄວາມຂອບໃຈມາຍັງທຸກທ່ານ ທີ່ໄດ້ຮ່ວມບໍລິຈາກຊ່ວຍຜູ້ປະສົບໄພພິບັດນໍ້າຖ້ວມທີ່ ແຂວງ ອັດຕະປື ຜ່ານ BCEL OneHeart ແລະ ຂໍອວຍພອນໄຊອັນປະເສີດມາຍັງທຸກທ່ານຈົ່ງມີຄວາມສຸກຄວາມຈະເລີນ ແລະ ມີຜົນສຳເລັດທຸກໜ້າທີ່ວຽກງານດ້ວຍ.







ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ວ່ອງໄວ ໝັ້ນໃຈ

1555 | BCEL Bank | www.bcel.com.la